# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 7

## ຄວາມຮູ້ກ່ຽວກັບທັກສະການໄກ່ເກ່ຍ

## Knowledge of mediation skills

ທັກສະໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນເຕັກນິກ, ວິທີການ ສະເພາະ ແລະ ທັງແມ່ນຄວາມຮັບຜິດຊອບໂດຍກົງຂອງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕໍ່ຂໍ້ຂັດແຍ່ງທີ່ຕົນເອງໄດ້ຮັບຜິດຊອບໃຫ້ແກ້ໄຂ ບົນພື້ນຖານທີ່ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ກຳນົດໄວ້.

ທັກສະການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍເປັນວິທີທາງອອກທີ່ດີການການກະຕຸ້ນ ແລະ ສ້າງສິ່ງຈູງໃຈໃຫ້ຄູ່ກໍລະນີທັງສອງຝ່າຍສາມາດຕົກລົງກັນໄດ້ ເນື້ອໃນຂອງບົດນີ້ແມ່ນໄດ້ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ທັກສະການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີການໄກ່ເກ່ຍ, ຫຼັກການພື້ນຖານຂອງການໄກ່ເກ່ຍ, ເງື່ອນໄຂ ແລະ ຂອບເຂດຂອງການໄກ່ເກ່ຍ.

## 1. ຄວາມໝາຍ, ຄວາມສຳຄັນ ແລະ ຈຸດປະສົງ

### 1.1 ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍດ້ວຍຮູບການໄກ່ເກ່ຍແມ່ນ ການແກ້ໄຂບັນຫາທີ່ບໍ່ຖືກຕ້ອງປອງດອງກັນ, ຂັດແຍ່ງກັນທາງດ້ານເສດຖະກິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນການຜະລິດ-ທຸລະກິດ ທີ່ພາໃຫ້ເກີດມີຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຊຶ່ງຄວາມເສຍຫານໄດ້ເກີດຂຶ້ນນັ້ນພາໃຫ້ມີການຮ້ອງຟ້ອງ ຫຼື ຮ້ອງຂໍ ເພື່ອໃຫ້ມີການພິຈາລະນາແກ້ໄຂດ້ວຍການໄກ່ເກ່ຍ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການເຄື່ອນໄຫວນອກລະບົບສານ (ADR) ຊຶ່ງເປັນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດທີ່ເກີດຈາກການລະເມີດຂໍ້ຜູກພັນໃນສັນຍາການດຳເນີນການຜະລິດ, ທຸລະກິດ ເປັນຕົ້ນແມ່ນການລົງທຶນ, ການຄ້າ, ການບໍລິການ ແລະ ອື່ນໆ ດວ້ຍການໄກ່ເກ່ຍບົນພື້ນຖານຄວາມຕື່ນຕົວສະໝັກໃຈຂອງຄູ່ກໍລະນີໃຫ້ແກ້ໄຂ ຊຶ່ງອາດສະແດງອອກໃນຂໍ້ກຳນົດທີ່ຄູ່ກໍລະນີທັງສອງຝ່າຍໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນແລ້ວຄູ່ກໍລະນີໄດ້ສະໝັກໃຈໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂຊຶ່ງສັງລວມແລ້ວຂໍ້ຂັດແຍ່ງທີ່ນຳມາແກ້ໄຂນັ້ນ ແມ່ນຂໍ້ຂັດແຍ່ງທີ່ນອນຢູ່ໃນຂົງເຂດເສດຖະກິດ-ການຄ້າ ຕາມທີ່ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກຳນົດໄວ້ໂດຍມີການຮ້ອງຂໍ ໃຫ້ພິຈາລະນາແກ້ໄຂຈາກຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍ.

ທັກສະການໄກ່ເກ່ຍ ແມ່ນການແກ້ໄຂດ້ວຍວິທີການປຶກສາຫາລື, ປະນີປະນອມ ແລະ ເຈລະຈາຊຶ່ງດຳເນີນໂດຍຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍເພື່ອຊອກວິທີທາງອອກໃຫ້ຄູ່ກໍລະນີສາມາດຢຸດຕິຂໍ້ຂັດແຍ່ງນຳກັນໄດ້ດ້ວຍການນຳໃຊ້ເທັກນິກ, ບົດຮຽນປະສົບການ ແລະ ຄວາມສາມາດຂອງຜູ້ໄກ່ເກ່ຍ ແນ່ໃສ່ຊຸກຍູ້ໃຫ້ຄູ່ກໍລະນີຕື່ນຕົວ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນດ້ວຍຄວາມສະໝັກໃຈ ແລະ ສາມາດປະຕິບັດໄດ້ໂດຍຄູ່ກໍລະນີເອງ ຊຶ່ງມີຜູ້ໄກ່ເກ່ຍຜູ້ໜຶ່ງ ຫຼື ຫຼາຍຄົນເປັນຄົນກາງ[1].

### 1.2 ຄວາມສຳຄັນ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ມີຄວາມສຳຄັນແກ່ຄູ່ກໍລະນີ ເນື່ອງຈາກການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີນີ້ສາມາດຮັກສາເປັນຄວາມລັບ, ຮັກສາໄດ້ຄວາມສາມັກຄີ, ຮັບປະກັນຄວາມວ່ອງໄວ ແລະ ເປັນການປະຢັດຄ່າໃຊ້ຈ່າຍໃຫ້ແກ່ຄູ່ກໍລະນີ.

ເປັນລະບົບແກ້ໄຂຂໍ້ຂັດແຍ່ງທີ່ສ້າງຂຶ້ນໂດຍລັດ ແລະ ຖືກຮັບຮູ້ໂດຍສາກົນປະກອບສ່ວນທີ່ສຳຄັນເຂົ້າໃນການຫຼຸດຜ່ອນການແກ້ໄຂຄະດີຢູ່ສານປະຊາຊົນ.

ເປັນການຫັນເຂົ້າສູ່ລະບົບການແກ້ໄຂຂໍ້ຂັດແຍ່ງສາກົນເທື່ອລະກ້າວ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກຂອງສູນ ແລະ ຫ້ອງການການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຄູ່ກໍລະນີ, ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ແກ້ໄຂບັນຫາໃຫ້ແທດເໝາະກັບສະພາວະຄວາມເປັນຈິງຂອງຂໍ້ຂັດແຍ່ງບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີໂດຍບໍ່ມີການບັງຄັບນາບຂູ່[2], ບໍ່ມີການຈຳແນກເພດ, ເຊື້ອຊາດ, ສາສະໜາ, ສັນຊາດ, ຊົນເຜົ່າຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ, ບໍ່ເຂົ້າຂ້າງອອກຊາ, ບໍ່ມີການແຊກແຊງຈາກພາຍນອກ, ຖືເອົາຄຸນນະທຳ ເຫັນອົກເຫັນໃຈກັນຂອງຄູ່ກໍລະນີ ແລະ ພິຈາລະ ນາແກ້ໄຂບົນພື້ນຖານກົດໝາຍ ແລະ ບຽບການ.

ເປັນວິທີການແກ້ໄຂຂໍ້ຂັດແຍ່ງທີ່ຍຸຕິທຳ, ມະນຸດສະທຳ ແລະ ມີຂະບວນການທີ່ກະທັດຮັດ, ບໍ່ຜ່ານຫຼາຍຂັ້ນຕອນ ເຮັດໃຫ້ຄູ່ກໍລະນີປະຢັດຄ່າໃຊ້ຈ່າຍ ແລະ ເວລາ;.

ຂໍ້ຂັດແຍ່ງທີ່ຖືກນຳມາພິຈາລະນາແກ້ໄຂນັ້ນແມ່ນບໍ່ສາມາດເປີດເຜີຍສູ່ສັງຄົມ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ.

ເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການສ້າງຄວາມປອງດອງ, ຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມ ແນ່ໃສ່ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂະຫຍາຍຕົວ ແລະ ຍືນຍົງ.

### 1.3 ຈຸດປະສົງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ມີຈຸດປະສົງເພື່ອເຮັດໃຫ້ຄູ່ກໍລະນີຕົກລົງຍຸດຕິຂໍ້ຂັດແຍ່ງດ້ວຍຄວາມສະໝັກໃຈໂດຍມີຜູ້ໄກ່ເກ່ຍເປັນຄົນກາງ ເພື່ອຊອກຫາວິທີທາງແກ້ໄຂທີ່ຄູ່ກໍລະນີທັງສອງຝ່າຍສາມາດຍອມຮັບເອົາໄດ້ ຫຼື ເວົ້າອີກຢ່າງໜຶ່ງວ່າຕ່າງຝ່າຍຕ່າງມີຜົນປະໂຫຍດ ຈຸດປະສົງແມ່ນແນ່ໃສ່ເຮັດໃຫ້ຄູ່ກໍລະນີສາມາດຢຸດຕິຂໍ້ຂັດແຍ່ງ ຫຼື ສາມາດສືບຕໍ່ດຳເນີນທຸລະກິດຕໍ່ໄປ ຊຶ່ງເປັນການສ້າງຜົນດີໃຫ້ແກ່ການດຳເນີນທຸລະກິດຂອງຄູ່ກໍລະນີເອງ.

---

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 26

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 9

ຈຸດປະສົງຂອງການໄກ່ເກ່ຍສະແດງອອກຢ່າງຈະແຈ້ງຄືດັ່ງນີ້:

- ເພື່ອແກ້ໄຂບັນຫາທີ່ຂັດແຍ່ງກັນລະຫວ່າງຄູ່ກໍລະນີຢ່າງສັນຕິວິທີ ເປັນທຳ ແລະ ວ່ອງໄວ ໝາຍວ່າການໄກ່ເກ່ຍແມ່ນເພື່ອແກ້ໄຂບັນຫາທີ່ຂັດແຍ່ງກັນ ຫຼື ບໍ່ລົງລອຍກັນນັ້ນໃຫ້ສິ້ນສຸດລົງດ້ວຍຄວາມພໍໃຈຂອງຄູ່ກໍລະນີ ບໍ່ເຂົ້າຂ້າງອອກຂາຝ່າຍໃດຝ່າຍໜຶ່ງ ແລະ ບໍ່ຖ່ວງດຶງແກ່ຍາວເວລາ;

- ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດທີ່ຖືກລະເມີດ ໝາຍຄວາມວ່າ ການໄກ່ເກ່ຍແມ່ນແນ່ໃສ່ທວງໃຫ້ຟື້ນຟູສິດ ແລະ ຜົນປະໂຫຍດຄືນໃຫ້ແກ່ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ;

- ເພື່ອເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບ.

## 2. ຫຼັກການພື້ນຖານຂອງການໄກ່ເກ່ຍ

ໃນການດຳເນີນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງກຳແໜ້ນ ແລະ ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

### 2.1 ຄວາມສະໝັກໃຈຂອງຄູ່ກໍລະນີ

ໝາຍເຖິງການທີ່ຄູ່ກໍລະນີນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂໂດຍບໍ່ມີການບັງຄັບນາບຂູ່ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃດ ໜຶ່ງ[3] ຫຼື ເວົ້າອີກຢ່າງໜຶ່ງວ່າແມ່ນເຈດຈຳນົງຂອງຄູ່ກໍລະນີເອງ ທີ່ຕ້ອງການໃຫ້ຂໍ້ຂັດແຍ່ງຂອງພວກກ່ຽວໄດ້ຮັບການແກ້ໄຂໂດຍອົງການດັ່ງກ່າວ ຊຶ່ງບໍ່ຕ້ອງການໃຫ້ໄປດຳເນີນການແກ້ໄຂຢູ່ສານປະຊາຊົນ(ຕາມຂະບວນການຍຸຕິທຳ) ຄວາມສະໝັກໃຈຂອງຄູ່ກໍລະນີໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະແດງອອກດ້ວຍສອງຮູບການດັ່ງນີ້:

ຮູບການທີ່ 1: ໄດ້ກຳນົດໄວ້ໃນສັນຍາ ໝາຍຄວາມວ່າ ໃນເວລາສ້າງສັນຍາຄູ່ກໍລະນີ ຫຼື ຄູ່ສັນຍາໄດ້ມີຂໍ້ກຳນົດຕົກລົງກັນໃນເບື້ອງຕົ້ນໂດຍເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນອົງການແກ້ໄຂໃນກໍລະນີທີເກີດມີບັນຫາຂໍ້ຂັດແຍ່ງ ເຊັ່ນວ່າ" ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນຈາກການລະເມີດສັນຍາດັ່ງກ່າວຄູ່ກໍລະນີທັງສອງຝ່າຍເຫັນດີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນບ່ອນພິຈາລະນາແກ້ໄຂດ້ວຍຮູບການໄກ່ເກ່ຍ".

ຮູບການທີ 2: ຄູ່ກໍລະນີໄດ້ສະໝັກໃຈໃຫ້ພິຈາລະນາແກ້ໄຂຂໍ້ຂັດແຍ່ງ ໝາຍຄວາມວ່າ: ໃນສັນຍາຄູ່ກໍລະນີທັງສອງຝ່າຍບໍ່ໄດ້ກຳນົດ ແລະ ຕົກລົງກ່ຽວກັບອົງການແກ້ໄຂຂໍ້ຂັດແຍ່ງ, ແຕ່ເມື່ອມີບັນຫາຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບເຫັນດີເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນບ່ອນພິຈາລະນາແກ້ໄຂ, ພ້ອມທັງເລືອກເອົາຮູບການແກ້ໄຂດ້ວຍການໄກ່ເກ່ຍ ການຕົກລົງດັ່ງກ່າວຕ້ອງເປັນລາຍລັກອັກສອນໂດຍທີ່ຄູ່ກໍລະນີຕ້ອງຍື່ນຄຳຕົກລົງເຫັນດີດັ່ງກ່າວມາໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອດຳເນີນຕາມຂັ້ນຕອນຂອງການແກ້ໄຂຂໍ້ຂັດແຍ່ງ ຫຼື ວ່າພາຍຫຼັງມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີຝ່າຍຮ້ອງຂໍໄດ້ປະກອບຄຳຮ້ອງຂໍ ພ້ອມດ້ວຍຮູບການແກ້ໄຂດ້ວຍການໄກ່ເກ່ຍຕາມແບບພິມຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລ້ວຍື່ນມາຍັງອົງການແກ້ໄຂດັ່ງກ່າວ ພ້ອມກັນນັ້ນຄູ່ກໍລະນີຝ່າຍຖືກຮ້ອງຂໍກໍໄດ້ເຂົ້າມາຮັບຊາບຄຳຮ້ອງຂໍ ແລະ ປະກອບເອກະສານຄຳແກ້ຄຳຮ້ອງຂໍ ພ້ອມດ້ວຍຮູບການແກ້ໄຂດ້ວຍຮູບການໄກ່

[3] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 9

ເກ່ຍຕາມແບບພິມຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລ້ວຍື່ນມາຍັງອົງການແກ້ໄຂດັ່ງກ່າວ ນີ້ກໍຖືໄດ້ວ່າແມ່ນຄວາມສະໝັກໃຈຂອງຄູ່ກໍລະນີໃນການແກ້ໄຂຂໍ້ຂັດແຍ່ງ.

**2.2 ການຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ**

ໝາຍຄວາມວ່າ: ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ່ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍຕ້ອງໄດ້ຄຳນຶງວ່າ ວິທີການແກ້ໄຂຂໍ້ຂັດແຍ່ງທີ່ຄູ່ກໍລະນີທັງສອງຝ່າຍຍອມຮັບເອົາໄດ້ນັ້ນ ແມ່ນບົນພື້ນຖານຄວາມຍຸຕິທຳ, ຮັບປະກັນຄວາມວ່ອງໄວ ແລະ ສອດຄ່ອງກັບກົດໝາຍ.[4]

**2.3 ຄວາມສະເໝີພາບຂອງຄູ່ກໍລະນີ**

ໝາຍຄວາມວ່າ: ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີແຕ່ລະຝ່າຍມີສິດເທົ່າທຽມກັນ, ສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ໄວ, ເຊື້ອຊາດ, ສັນຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ. ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດທີ່ດຳເນີນທຸລະກິດ ຢູ່ສປປລາວ ມີສິດສະເໝີພາບຄືກັນກັບພົນລະເມືອງລາວ ຖ້າຫາກກົດໝາຍບໍ່ໄດ້ກຳນົດໄວ້ຢ່າງອື່ນ.[5]

**2.4 ຄວາມເປັນເອກະລາດ, ທ່ຽງທຳ ແລະ ໂປ່ງໃສ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ**

ໝາຍຄວາມວ່າ: ໃນການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເປັນເອກະລາດ, ທ່ຽງທຳ ແລະ ຮັບປະກັນຄວາມໂປ່ງໃສພາຍໃຕ້ລະບຽບກົດໝາຍ ປາສະຈາກການແຊກແຊງຈາກບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.[6]

**2.5 ພາສາທີ່ນຳໃຊ້**

ພາສາທີ່ນຳໃຊ້ເຂົ້າໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແມ່ນພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີຫາກຕົກລົງກັນໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ບໍ່ຮູ້ພາສາລາວສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນໂດຍຜ່ານຜູ້ແປພາສາ.[7]

**2.6 ການຮັບປະກັນຄວາມຮັບ**

ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ການຮັກສາຄວາມລັບມີຄວາມສຳຄັນໃຫ້ແກ່ຄູ່ກໍລະນີເພາະໃນການດຳເນີນທຸລະກິດຂອງພວກກ່ຽວນັ້ນອາດມີຄວາມລັບ ຊຶ່ງພວກກ່ຽວບໍ່ຕ້ອງການໃຫ້ຂໍ້ຂັດແຍ່ງນັ້ນຖືກເປີດເຜີຍສູ່ສັງຄົມ ອັນຈະພາໃຫ້ມີຜົນກະທົບຕໍ່ການດຳເນີນທຸລະກິດທັງເປັນການຂາດຄວາມເຊື່ອຖື ຫຼື ເຊື່ອໝັ້ນທາງດ້ານທຸລະກິດ. ສະນັ້ນ, ຄູ່ກໍລະນີຈຶ່ງສາມາດເລືອກຮູບແບບການໄກ່ເກ່ຍເພື່ອຕົກລົງບັນຫາ ພາໃຫ້ຂໍ້ຂັດແຍ່ງຈົບລົງໂດຍບໍ່ເປີດເຜີຍສູ່ສັງຄົມ ແລະ ໃນຂະບວນການດຳເນີນການໄກ່ເກ່ຍມີແຕ່ຄູ່ກໍລະນີເຂົ້າຮ່ວມດ້ວຍຕົນເອງໂດຍອາໄສຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍເປັນຜູ້ໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອແນະນຳທາງອອກທີ່ເປັນຜົນປະໂຫຍດແກ່ທັງສອງຝ່າຍ. ນອກນັ້ນ, ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ, ຫຼັກຖານ ແລະ ເອກະສານຕ່າງໆທີ່ໄດ້ນຳມາສະເໜີໃນເວລາການໄກ່ເກ່ຍຕ້ອງໄດ້ຮັກສາເປັນຄວາມລັບ. ຄູ່ກໍລະນີ ແລະ ຜູ້

---

[4] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 10

[5] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 11

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 12

[7] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 13

ເຂົ້າຮ່ວມອື່ນບໍ່ມີສິດເປີດເຜີຍຄວາມລັບຕໍ່ບຸກຄົນພາຍນອກ, ເວັ້ນເສຍແຕ່ໄດ້ຮັບການອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.[8] ບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍຈະຮັກສາໄວ້ເປັນຄວາມລັບ ແລະ ບໍ່ສາມາດນຳໄປເປັນຫຼັກຖານໃນການແກ້ໄຂດ້ວຍຮູບການຕັດສິນໄດ້ ຫຼື ການດຳເນີນຄະດີຂອງສານ ແລະ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍບໍ່ມີສິດເປີດເຜີຍບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍນັ້ນ ສູ່ບຸກຄົນອື່ນ.

## 3. ເງື່ອນໄຂ ແລະ ຂອບເຂດຂອງການໄກ່ເກ່ຍ

ຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ນຳມາພິຈາລະນາໄກ່ເກ່ຍຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເປັນຂໍ້ຂັດແຍ່ງທີ່ເກີດຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ, ການຄ້າ ຕາມຄວາມສະໝັກໃຈຂອງຄູ່ກໍລະນີ, ແຕ່ຕ້ອງມີເງື່ອນໄຂໃດໜຶ່ງດັ່ງນີ້:

- ແມ່ນຂໍ້ຂັດແຍ່ງທີ່ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ໄດ້ສະໝັກໃຈໃຫ້ແກ້ໄຂ;
- ບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນພວມດຳເນີນການແກ້ໄຂຢູ່ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ;
- ບໍ່ແມ່ນຂໍ້ຂັດແຍ່ງທີ່ພົວພັນເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ.

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາໄດ້ພຽງແຕ່ຂໍ້ຂັດແຍ່ງທາງດ້ານເສດຖະກິດ-ການຄ້າ ຫຼື ການດຳເນີນທຸລະກິດ.




[8] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 14

ຜູ້ເຂົ້າຮ່ວມປະກອບ ມີ:

1. ຜູ້ໄກ່ເກ່ຍທີ່ຄູ່ກໍລະນີໄດ້ເປັນເອກະພາບກັນເລືອກ
2. ຜູ້ບັນທຶກ
3. ຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
4. ຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
5. ຜູ້ແປພາສາ (ຖ້າມີ)
6. ບຸກຄົນທີສາມ (ຖ້າມີ)
7. ທະນາຍຄວາມ (ຖ້າມີ)




ຜູ້ເຂົ້າຮ່ວມປະກອບມີ:

1. ຄະນະໄກ່ເກ່ຍ ທີ່ຝ່າຍຮ້ອງຂໍເລືອກ
2. ຄະນະໄກ່ເກ່ຍ ທີ່ຝ່າຍຖືກຮ້ອງຂໍເລືອກ
3. ຜູ້ບັນທຶກ
4. ຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
5. ຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
6. ຜູ້ແປພາສາ (ຖ້າມີ)
7. ບຸກຄົນທີສາມ (ຖ້າມີ)
8. ທະນາຍຄວາມ (ຖ້າມີ)




ຜູ້ເຂົ້າຮ່ວມປະກອບມີ:

1. ປະທານໄກ່ເກ່ຍ ແມ່ນຜູ້ທີ່ຄະນະໄກເກ່ຍເລືອກ
2. ຄະນະໄກ່ເກ່ຍ ທີ່ຝ່າຍຮ້ອງຂໍເລືອກ
3. ຄະນະໄກ່ເກ່ຍ ທີ່ຝ່າຍຖືກຮ້ອງຂໍເລືອກ
4. ຜູ້ບັນທຶກ
5. ຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
6. ຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
7. ຜູ້ແປພາສາ (ຖ້າມີ)
8. ບຸກຄົນທີສາມ (ຖ້າມີ)
9. ທະນາຍຄວາມ (ຖ້າມີ)

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ ສພຊ, ລົງວັນທີ 22/6/2018.
2. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
3. ປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.